**Nam Theun 2 Watershed Management and Protection Authority (NT2 WMPA)**
Oudomsouck Village, Nakai District, Khammouane Province, Lao PDR
Tel.: (856 51) 620123; Fax: (856 51) 620131
www.nt2wmpa.gov.la

# ປະກາດຮັບສະມັກງານ

ເພື່ອປະຕິບັດສັນຍາສຳປະທານ ການສ້າງໂຮງງານໄຟຟ້າພະລັງນ້ຳ ນ້ຳເທີນ 2 ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ບໍລິສັດໄຟຟ້າ ນ້ຳເທີນ 2, ລັດຖະບານ ໄດ້ສ້າງຕັ້ງ ອົງການຄຸ້ມຄອງແລະປົກປັກຮັກສາ ແຫຼ່ງນ້ຳ ນ້ຳເທີນ 2 (ອຄປ.ທ 2) ຂຶ້ນມາ ຕາມດຳລັດ ນາຍົກລັດຖະມົນຕີ ເລກທີ 25/ນຍ. ເພື່ອເຮັດໜ້າທີ່ຄຸ້ມຄອງ ແລະ ປົກປັກຮັກສາ ແຫຼ່ງນ້ຳ ນ້ຳເທີນ 2 ແລະ ປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ. ເພື່ອປະຕິບັດໜ້າທີ່ ດັ່ງກ່າວ ອຄປ.ທ 2 ໄດ້ຮັບທຶນຊຸກຍູ້ ຈາກບໍລິສັດນ້ຳເທີນ 2 ປະລະປະມານ 1 ລ້ານ ໂດລາ ສະຫະລັດ.

ເພື່ອເຮັດໃຫ້ ການປະຕິບັດ ພາລະບົດບາດ ແລະ ໜ້າທີ່ດັ່ງກ່າວ ບັນລຸຜົນຕາມຄາດໝາຍ, ອຄປ.ທ 2 ມີຄວາມຈຳເປັນ ຕ້ອງໄດ້ ປະກອບພະນັກງານ ຜູ້ທີ່ມີຄວາມຮູ້ຄວາມສາມາດເໝາະສົມ ໃຫ້ແກ່ ກອງເລຂາ, ອຄປ.ທ 2 ທີ່ມີນ້າທີ່ເປັນເສນາ ທິການໂດຍກົງ ໃນການຈັດຕັ້ງປະຕິບັດ 3 ຕຳແໜ່ງງານສຳຄັນຕົ້ນຕໍ່ ຄື: ***(1)*** ຫົວໜ້າ ພະແນກບໍລິຫານ ແລະ ຮ່ວມມື, ***(2)*** ຫົວໜ້າພະແນກ ແຜນການ, ຕິດຕາມຊຸກຍູ້ ແລະ ປະເມີນຜົນ, ແລະ ***(3)*** ຫົວໜ້າພະແນກເຊື່ອມປະສານວຽກງານອະນຸລັກ ແລະ ການພັດທະນາ (ວິຊາການ).

ດັ່ງນັ້ນ, ຈິ່ງໄດ້ອອກແຈ້ງການ ເຖິງ ບຸກຄົນທີ່ມີຄວາມຮູ້ຄວາມສາມາດ ໃນດ້ານດັ່ງກ່າວ ທີ່ມີຄວາມສົນໃຈ ຍື່ນໃບສະມັກງານ ຕາມຕຳແໜ່ງດັ່ງກ່າວ ພ້ອມທັງ ຊີວະປະຫວັດຫຍໍ້ ພ້ອມ ລາຍລະອຍດກ່ຽວກັບ ລະດັບການສຶກສາ ແລະ ປະສົບການເຮັດວຽກໃນໄລຍະຜ່ານມາ ທາງ email ເຖິງ phouthonesophathilath@gmail.com. ກຳນົດເວລາ ການສົ່ງໃບສະມັກງານ ເຖິງວັນທີ **15/10/2012.** ຜູ້ສະມັກທີ່ໄດ້ຮັບການຄັດເລືອກເຂົ້າໃນບັນຊີສັ້ນ **(Short list)** ຈິ່ງຈະໄດ້ຖືກເຊີນມາສຳພາດຍັງຄວາມສາມາດ ດ້ານປະສົບການ. ຢາກໄດ້ລາຍລະອຍດເພີ້ມເຕີມ ກະລຸນາຕິດຕໍ່:

1. ທ່ານ ພູທອນ ໂສພາທິລາດ, ຫົວໜ້າກອງເລຂາ, ອຄປ.ທ **2** ໝ, ໝາຍເລກໂທລະສັບ **020 55507763** (ໃນເວລາລັດຖະການ)

ລາຍລະອຽດ ກ່ຽວກັບຕຳແໜ່ງງານ ແລະ ລະດັບຄວາມຮູ້ຄວາມສາມາດ ທີ່ຕ້ອງການ ມີດັ່ງລຸ່ມນີ້:

## ຕຳແໜ່ງທີ 1: ຫົວໜ້າພະແນກ ບໍລິຫານ

ບ່ອນຂຶ້ນກັບ: ມີຄວາມຮັບຜິດຊອບໂດຍກົງຕໍ່: ຫົວໜ້າກອງເລຂາ, ອຄປ.ທ 2
ໜ້າທີ່ຫຼັກ: ຮັບຜິດຊອບໂດຍກົງຕໍ່ ຜົນສຳເລັດ ໃນວຽກງານຄຸ້ມໃຄອງບໍລິຫານ, ຄຸ້ມຄອງການເງິນ, ຄຸ້ມຄອງພະນັກງານ ແລະ ຄຸ້ມຄອງ ຊັບສົມບັດຄົງທີ, ການເຮັດສັນຍາ ແລະ ພົວພັນກັບພາຍນອກ.

ໜ້າວຽກຕົ້ນຕໍ:
- ວຽກບໍລິຫານສຳນັກງານຫ້ອງການ ໂດຍລວມ
- ຊ່ວຍວຽກເອກະສານ ຫົວໜ້າກອງເລາຂາ ຮອບດ້ານ
- ຄຸ້ມຄອງ ແລະ ພັດທະນາພະນັກງານ
- ຄຸ້ມຄອງການເງິນ ແລະ ຊັບສິນສ່ວນລວມ
- ຄຸ້ມຄອງເອກະສານ
- ເອື້ອອຳນວຍການເຮັດວຽກຂອງພາກສ່ວນອື່ນໆ ທີ່ກ່ຽວພັນ
- ປະສານງານ, ຕິດຕໍ່ພົວພັນ ແລະ ຮ່ວມມືສາກົນ
- ພິທີການ, ຮັບຕ້ອນ ແລະ ຈັດກອງປະຊຸມ

ດ້ານການສຶກສາ :
- ຈົບການສຶກສາ ຊັ້ນກາງ ຫຼື ຊັ້ນສູງກ່ຽວກັບວິຊາບໍລິຫານທຸລະກິດ ຫຼື ຈົບການຝຶກອົບຮົມວິຊາອື່ນໆທີ່ກ່ຽວຂ້ອງ
- ມີໃບຢັ້ງຢືນການຝຶກອົບຮົມ

ປະສົບການ ແລະ ຄວາມຊຳນານ:

- ມີປະສົບການຢ່າງນອຍ 5 ປີ. ແລະ ຄວາມສາມາດໃນການເຮັດວຽກບໍລິຫານເຊັ່ນ, ວຽກຈັດສັນບຸຄະລາກອນ, ບໍລິ ຫານການເງິນ ແລະ ວຽກຈັດຕັ້ງບໍລິຫານ
- ມີຄວາມສາມາດໃນການຕິດຕໍ່ພົວພັນປະສານງານກັບພາຍນອກເປັນຢ່າງດີ, ສາມາດອ່ານ ແລະ ຂຽນພາສາອັງກິດ ໄດ້ຢ່າງ ຄ່ອງແຄ້ວ, ມີຄວາມສາມາດໃນການນໍາໃຊ້ຄອມພິວເຕີ ແລະ ເຂົ້າໃຈລະບົບຖານຂໍ້ມູນໄດ້ດີ.

.

<u>ຄວາມຕ້ອງການທາງດ້ານເງື່ອນໄຂອື່ນໆ:</u>
- ເປັນພົນລະເມືອງລາວ, ມີສຸຂະພາບສົມບູນດີ, ມີຄວາມປະສົງ ແລະ ສາມາດເຮັດວຽກຢູ່ຕາມພື້ນທີ່ຊົນນະບົດ ຫ່າງໄກ ສອກຫຼີກ

<u>ບ່ອນປະຈໍາການ:</u>
- ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນໍ້າ ນໍ້າເທີນ 2 ກອງເລຂາ ອຄປ ທ 2. ເມືອງນາກາຍ ແຂວງຄໍາມ່ວນ , ອອກພາກສະໜາມບາງຄັ້ງຄາວ ອີງຕາມຄວາມຮຽກຮ້ອງຕ້ອງການທາງດ້ານວຽກງານ.

<u>ໄລຍະເວລາ (ອາຍຸ ສັນຍາ)</u>
- ສອງປີ, ຂຶ້ນກັບການປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານຕົວຈິງ. ສາມາດມາດຕໍ່ສັນຍາອອກໄປອີກ.

## <u>ຕໍາແໜ່ງງານທີ 2 :</u> ຫົວໜ້າ ພະແນກ ແຜນການ, ຕິດຕາມຊຸກຍູ້ ແລະ ປະເມີນຜົນ **(PMED)**

<u>ມີຄວາມຮັບຜິດຊອບຕໍ່:</u> ຫົວໜ້າ ແລະ ຄະນະ ກອງເລຂາ ອຄປ ທ 2.

<u>ໜ້າທີ່ຮັບຜິດຊອບຫຼັກ:</u>
ມີຄວາມຮັບຜິດຊອບໂດຍກົງຕໍ່ກັບການຈັດວາງແຜນການ ແລະ ງົບປະມານ, ຊຸກຍູ້ຕິດຕາມກວດກາ ແລະ ປະເມີນຜົນຕີລາຄາ ງົບປະມານ, ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບແຜນການໃນການຈັດຕັ້ງປະຕິບັດກິດຈະກໍາ

<u>ໜ້າວຽກ:</u>
- ຄຸ້ມຄອງຈັດສັນທົ່ວໄປໃນພະແນກ
- ຜັນຂະຫຍາຍແຜນຍຸດທະສາດຂອງອົງການ ໃຫ້ເປັນແຜນງານຢ່າງລະອຽດ
- ຈັດສັນ ແລະ ກະກຽມແຜນດໍາເນີນງານ,
- ກວດສອບ, ຄັດເລືອກແຜນດໍາເນີນງານ ແລະ ງົບປະມານ
- ຄຸ້ມຄອງ ແລະ ຈັດສັນງົບປະມານໃຫ້ມີປະສິດທິຜົນສູງ
- ສ້າງລະບົບກົນໄກການຕິດຕາມກວດກາ ແລະ ລາຍງານ, ຂໍ້ກໍານົດ, ລະບຽບການ ແລະ ແບບຟອມອື່ນໆທີ່ກ່ຽວຂ້ອງ.
- ຊຸກຍູ້ຕິດຕາມ ແລະ ປະເມີນຜົນ, ລາຍງານຄວາມຄືບໜ້າຈາກຜົນການຈັດຕັ້ງປະຕິບັດແຜນການ
- ເກັບຮັກສາຂໍ້ມູນ ແລະ ຈັດສັນຂໍ້ມູນ, ລວມທັງການສ້າງຖານຂໍ້ມູນ

- <u>ດ້ານການສຶກສາ:</u>
- ຈົບການສຶກສາຢ່າງນ້ອຍ ຊັ້ນກາງ, ຫຼື ຊັ້ນສູງຂຶ້ນໄປວິຊາສະເພາະ ກ່ຽວກັບປ່າໄມ້, ການຈັດສັນຄຸ້ມຄອງຊັບພະຍາກອນ ທໍາມະ ຊາດແບບມີ ສ່ວນຮ່ວມ ຫຼື ຈົບການຝຶກ ອົບຮົມວິຊາອື່ນໆທີ່ກ່ຽວຂ້ອງ
- ມີໃບຢັ້ງຢືນການຝຶກອົບຮົມ

<u>ປະສົບການ ແລະ ຄວາມຊໍານານ:</u>
- ມີປະສົບການ ແລະ ຄວາມສາມາດໃນການເຮັດວຽກກັບໂຄງການກອງທຶນສາກົນ, ໂດຍສະເພາະໂຄງການຈັດສັນ ຄຸ້ມຄອງ, ແຜນການ, ກວດກາຕິດຕາມ ແລະ ປະເມີນຜົນ.
- ມີປະສົບການໃນການຈັດສັນຄຸ້ມຄອງຖານຂໍ້ມູນ ແລະ ມີຄວາມສາມາດໃນການວິເຄາະຕີລາຄາເປັນຢ່າງດີ
- ມີຄວາມຮູ້ທາງດ້ານການຈັດສັນຊັບພະຍາກອນທີ່ດີ, ລວມທັງການຈັດສັນງົບປະມານ;
- ມີມະນຸດສໍາພັນ ແລະ ຄວາມສາມາດ ເປັນຢ່າງດີ ໃນການຕິດຕໍ່ພົວພັນກັບພາຍນອກ
- ສາມາດໃຊ້ພາສາອັງກິດໃນການຂຽນ ແລະ ຕິດຕໍ່ພົວພັນປະສານງານໄດ້ຢ່າງຄ່ອງແຄ້ວ
- ມີຄວາມຊໍານານໃນການໃຊ້ຄອມພິວເຕີ ແລະ ເຂົ້າໃຈກ່ຽວກັບລະບົບຖານຂໍ້ມູນເປັນຢ່າງດີ.
- ມີປະສົບການໃນການເຮັດວຽກຮ່ວມກັບຊຸມຊົນ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ

<u>ຄວາມຕ້ອງການທາງດ້ານເງື່ອນໄຂອື່ນໆ:</u>
- ເປັນພົນລະເມືອງລາວມີສຸຂະພາບສົມບູນດີ, ມີຄວາມປະສົງ ແລະ ສາມາດເຮັດວຽກຢູ່ຕາມພື້ນ ທີ່ຊົນນະບົດ ຫ່າງໄກ ສອກຫຼີກ ຕາມການມອບໝາຍ

<u>ບ່ອນປະຈໍາການ:</u>
- ຫ້ອງການ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນໍ້າ ນໍ້າເທີນ 2 ທີ່ເມືອງນາກາຍ ແຂວງຄໍາມ່ວນ (60%)
- ເຮັດວຽກຢູ່ພາກສະໜາມຕາມຄວາມຮຽກຮ້ອງຕ້ອງການ (40%)

ໄລຍະສັນຍາ (ອາຍຸສັນຍາ):

- ສອງປີ, ຂຶ້ນກັບການປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານຕົວຈິງ. ສາມາດມາດຕໍ່ສັນຍາອອກໄປອີກ.

.

**ຕຳແໜ່ງງານທີ 3: ຫົວໜ້າ ພະແນກເຊື່ອມປະສານວຽກງານອະນຸລັກ ແລະ ພັດທະນາ (PICAD)**

ມີຄວາມຮັບຜິດຊອບຕໍ່: ຫົວໜ້າ ແລະ ຄະນະກອງເລຂາ ອຄປ ທ 2.

ໜ້າທີ່ຮັບຜິດຊອບຫຼັກ:

ມີຄວາມຮັບຜິດຊອບໂດຍກົງຕໍ່ກັບການຈັດສັນແຜນການ ແລະ ງົບປະມານ, ຊຸກຍູ້ຕິດຕາມກວດກາ ແລະ ປະເມີນຜົນຕີລາຄາ ງົບປະມານ, ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບແຜນການໃນການຈັດຕັ້ງປະຕິບັດກິດຈະກຳ

ໜ້າວຽກຕົ້ນຕໍ:

- ຄຸ້ມຄອງແລະ ຈັດສັນທົ່ວໄປພາຍໃນພະແນກ
- ອອກແບບ ແລະ ທົດລອງ ວິທີການເຊື່ອມປະສານວຽກງານອະນຸລັກ ແລະ ພັດທະນາ( PICAD models)
- ໃຫ້ຄ ່ແນະນ ຳ ແລະ ຊີ້ ຳ ນ ່ພາຄະນະກຳມະການອະນຸລັກ ແລະ ພັດທະນາບ້ານໃນການຈັດຕັ້ງປະຕິບັດກິດຈະກຳ ວຽກງານອະນຸລັກ ແລະ ພັດທະນາ (VICAD)
- ສັງລວມ ແລະ ສ້າງແຜນດຳເນີນງານປະຈຳເດືອນ,ງວດ,ປີ ແລະ ແຜນງົບປະມານລວມຂອງພະແນກ
- ອອກແບບລະບົບ ແລະ ກົນໄກການກວດກາລາດຕະເວນທີ່ໄດ້ຮັບຜົນດີ ແລະ ຈັດຕັ້ງປະຕິບັດ;
- ອອກແບບວິທີການສົ່ງເສີມໃນວຽກງານພັດທະນາຊີວິດການເປັນຢູ່ ແລະ ທາງເລືອກໃນການສ້າງລາຍຮັບ
- ໃຫ້ຄຳແນະນຳ ແກ່ໜ່ວຍງານສຳຫຼວດຕິດຕາມສັດປ່າ ແລະ ສຶກສາຄົ້ນຄ້ວາຊີວະນາໆພັນ
- ກວດກາຕິດຕາມ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າ ແລະ ຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນການພາຍໃຕ້ພະແນກ ເຊື່ອມປະສານວຽກງານອະນຸລັກ ແລະ ພັດທະນາ (PICAD division )

ດ້ານການສຶກສາ:

- ຈົບການສຶກສາຢ່າງນ້ອຍ ຊັ້ນກາງ, ຫຼື ຊັ້ນສູງຂຶ້ນໄປ ວິຊາສະເພາະກ່ຽວກັບປ່າໄມ້, ການຈັດສັນຄຸ້ມຄອງຊັບພະຍາກອນ ທຳມະ ຊາດແບບມີ ສ່ວນຮ່ວມ ຫຼື ຈົບການຝຶກ ອົບຮົມວິຊາອື່ນໆທີ່ກ່ຽວຂ້ອງ
- ມີໃບຢັ້ງຢືນການຝຶກອົບຮົມ

ປະສົບການ ແລະ ຄວາມຊຳນານ:

- ມີປະສົບການຢ່າງນ້ອຍ 5 ປີ ແລະ ສາມາດສະແດງອອກໃນການເຮັດວຽກກ່ຽວກັບການຈັດສັນຊັບພະຍາກອນທຳ ມະຊາດແບບມີສ່ວນຮ່ວມ, ອະນຸລັກຊີວະນາໆພັນ, ປະຕິບັດລະບຽບການ ແລະ ມີຄວາມເຂົ້າໃຈດີຕໍ່ກັບແນວ ຄວາມຄິດ ຂອງ ຂະບວນການມີສ່ວນຮ່ວມໃນວຽກງານອະນຸລັກ ແລະ ພັດທະນາ.
- ມີຄວາມສາມາດໃນການຄົ້ນຄິດ, ປະດິດຄິດແຕ່ງ ແລະ ຄວາມຊຳນານໃນການວິເຄາະບັນຫາ
- ມີຄວາມຮູ້ ແລະ ປະສົບການທີ່ດີໃນການຈັດສັນໂຄງການ ແລະ ຊັບພະຍາກອນ
- ມີປະສົບການເຮັດວຽກຮ່ວມກັບໂຄງການສາກົນທີ່ພົວພັນກັບການມີສ່ວນຮ່ວມຂອງວຽກງານພັດທະນາຊົນນະບົດ
- ມີມະນຸດສຳພັນ ແລະ ຄວາມສາມາດ ເປັນຢ່າງດີ ໃນການຕິດຕໍ່ພົວພັນກັບພາຍນອກ
- ສາມາດໃຊ້ພາສາອັງກິດໃນການຂຽນ ແລະ ຕິດຕໍ່ພົວພັນປະສານງານໄດ້ຢ່າງຄ່ອງແຄ້ວ
- ມີປະສົບການໃນການເຮັດວຽກຮ່ວມກັບຊຸມຊົນ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ

ຄວາມຕ້ອງການເງື່ອນໄຂທາງດ້ານອື່ນໆ:

- ເປັນພົນລະເມືອງລາວມີສຸຂະພາບສົມບູນດີ, ມີຄວາມປະສົງ ແລະ ສາມາດເຮັດວຽກຢູ່ຕາມພື້ນ ທີ່ຊົນນະບົດຫ່າງໄກ ສອກຫຼີກ ຕາມການມອບໝາຍ

ບ່ອນປະຈຳການ:

- ຫ້ອງການ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນ້ຳ ນ້ຳເທີນ 2 ທີ່ເມືອງນາກາຍ ແຂວງຄຳມ່ວນ (60%)
- ເຮັດວຽກຢູ່ພາກສະໜາມຕາມຄວາມຮຽກຮ້ອງຕ້ອງການ (40%)

ໄລຍະສັນຍາ (ອາຍຸສັນຍາ):

- ສອງປີ, ຂຶ້ນກັບການປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານຕົວຈິງ. ສາມາດມາດຕໍ່ສັນຍາອອກໄປອີກ.